## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 8 ມະກະຣາ 2023 (01-08-2023)

---

## ຍິນດີແທນທີ່ຄວາມຢ້ານກົວ

*ເມື່ອໃດທີ່ທ່ານໄດ້ເວົ້າວ່າ "ຂ້າພະເຈົ້າດີໃຈທີ່ສິ່ງນັ້ນຜ່ານກາຍຂ້າພະເຈົ້າໄປແລ້ວ"?*

**ຈຸດສຳຄັນໃນບົດຮຽນ:** ຄວາມຢ້ານຈະເປັນສິ່ງທີ່ຜ່ານພົ້ນໄປໃນອານາຈັກຕລອດໄປເປັນນິດຂອງພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ.**

ຄັ້ງນຶ່ງຂ້າພະເຈົ້າເຄີຍໄດ້ແລ່ນ ເຄິ່ງມາຣາທອນກັບເພື່ອນຄົນນຶ່ງ. ຂ້າພະເຈົ້າບໍ່ມ່ວນຊື່ນໃນການແລ່ນ, ແຕ່ຂ້າພະເຈົ້າມັກຄວາມຄິດທີ່ເຮັດໃນສິ່ງທີ່ຂ້າພະເຈົ້າບໍ່ເຄີຍເຮັດມາກ່ອນ. ເມື່ອຂ້າພະເຈົ້າກວດເບິ່ງຕາລາງການຝຶກ, ຂ້າພະເຈົ້າເຫັນວ່າການແລ່ນສ່ວນຫຼາຍເປັນໄປໄດ້. ມັນເປັນການແລ່ນ-ສິບໄມລ໌ ສອງສາມທິດກ່ອນການແຂ່ງຂັນທີ່ບໍ່ສະເທືອນໃຈຂ້າພະເຈົ້າ. ຂ້າພະເຈົ້າຫວາດກົວແຕ່ວ່າຂ້າພະເຈົ້າຈະບໍ່ສາມາດແລ່ນຈົນຈົບ ແລະຢ້ານວ່າຂ້າພະເຈົ້າອາດຈະໄດ້ຮັບບາດເຈັບເສັຽກ່ອນ.

ໃນວັນແລ່ນລະຍະສິບໄມລ໌, ຂ້າພະເຈົ້າເຈັບໄປໝົດທັງຕົວ. ຂ້າພະເຈົ້າຢາກເຊົາ, ແຕ່ຕີນຂອງຂ້າພະເຈົ້າຍັງເຄື່ອນຍ້າຍໄປຕໍ່. ເມື່ອຂ້າພະເຈົ້າແລ່ນສຳເຣັດ, ຂ້າພະເຈົ້າໄດ້ນັ່ງໃນຣົດເທິ້ງບ່ອນອີງໄປທາງຫຼັງ ຍ້ອນວ່າທຸກສ່ວນເຈັບໄປໝົດ. ເມື່ອຂ້າພະເຈົ້າເມືອຮອດເຮືອນກໍໄດ້ພັກຜ່ອນແທນການບຸກບືນແລ່ນ ແລະກິນເຂົ້າກັບຄອບຄົວດ້ວຍຄວາມດີອົກດີໃຈ.

ພວກເຮົາມີມື້ທີ່ພວກເຮົາຢາກຍອມແພ້. ແຕ່ວ່າທີ່ນັ້ນມັນມີຈຸດຈົບທີ່ເຫັນໄດ້ໃນສາຍຕາ. ພວກເຮົາມີເຫດຜົນໃນຄວາມຫວັງເພາະວ່າວັນນຶ່ງພວກເຮົາຈະໄດ້ພັກຜ່ອນ ແລະຊື່ນຊົມໃນໂຕະທີ່ໄດ້ຈັດຕຽມຖ້າເຮົາໄວ້ໂດຍພຣະເຢຊູ. ຜູ້ທຳນວາຍເຊຟານີຢາໄດ້ເຕືອນພວກເຮົາວ່າຄວາມຢ້ານຈະກາຍເປັນສິ່ງທີ່ຜ່ານພົ້ນໄປໃນອານາຈັກຕລອດໄປເປັນນິດຂອງພຣະເຈົ້າ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ເຊຟານີຢາ 3:9-13.</u>

*9 ໃນຄາວນັ້ນ ເຮົາຈະປຸ່ງນລີ້ນຂອງຊົນຊາດທັງຫລາຍໃຫ້ເປັນລີ້ນບໍຣິສຸດ ເພື່ອວ່າທຸກຄົນຈະຮ້ອງອອກພຣະນາມພຣະຜູ້ເປັນເຈົ້າແລະ*
*ບົວຣະບັດພຣະອົງດ້ວຍຈິດໃຈອັນດຽວກັນ. 10 ພວກທີ່ຮ້ອງຫາເຮົາ ຄືລູກສາວຂອງຜູ້ທີ່ຖືກກະຈັດກະຈາຍໄປຈະນຳເອົາເຄື່ອງບູຊາມາ*
*ຖວາຍໃຫ້ເຮົາຈາກແມ່ນໍ້າແຫ່ງເອທິໂອເປັຽພາກນັ້ນ 11 ໃນວັນນັ້ນ ເຈົ້າຈະບໍ່ຖືກອັບອາຍຍ້ອນການທັງປວງຂອງເຈົ້າທີ່ໄດ້ກະບົດຕໍ່ສູ້ເຮົາ*
*ເພາະໃນເວລານັ້ນເຮົາຈະຖອນຄົນທັງຫຼາຍທີ່ຊົມຊື່ນຍິນດີໃນຄວາມຈອງຫອງອອກໄປໃນທ່າມກາງພວກເຈົ້າ ແລະພວກເຈົ້າຈະບໍ່ມີໃຈ*
*ໂອ້ອວດຕໍ່ໄປອີກໃນພູເຂົາບໍຣິສຸດຂອງເຮົາ. 12 ໃນທ່າມກາງພວກເຈົ້າເຮົາຈະເຮັດໃຫ້ມີຈຳພວກຄົນທຸກຍາກທີ່ຖ່ອມໃຈເຫຼືອຢູ່. 13 ບັນດາ*
*ຄົນທີ່ເຫລືອຢູ່ ຈາກພວກອິສຣາເອນ ພວກເຂົາຈະບໍ່ເຮັດການຊົ່ວຊ້າ ບໍ່ກ່າວຄຳຂີ້ຕົວະ ແລະໃນປາກຂອງພວກເຂົານັ້ນຈະຫາລີ້ນທີ່*
*ຫຼອກລວງກໍບໍ່ມີ ເພາະພວກເຂົາຈະທຽວໄປຊອກຫາກິນ ແລະ ພັກຜ່ອນ ນອນລົງຈະບໍ່ມີຜູ້ໃດເຮັດໃຫ້ພວກເຂົາຢ້ານກົວ.*

ລະຫວ່າງສະຕະວັດທີເຈັດກ່ອນ ຄ.ສ. ເມື່ອກະສັດໂຢຊີຢາໄດ້ເປັນກະສັດປົກຄອງຢູດາ, ເຊຟານີຢາມີບົດບາດເປັນຜູ້ທຳນວາຍ. ບິດາແລະປູ່ຂອງໂຢຊີຢາໄດ້ເປັນກະສັດທີ່ໂຫດຫ້ຽມ. ເຂົາໄດ້ປຸກລະດົມໃຫ້ປະຊາຊົນຕິດຕາມຮູບເຄົາຣົບແລະພຣະທຽມ, ແຕ່ແລ້ວເມື່ອໂຢຊີຢາຂຶ້ນຄອງຣາດ, ພຣະອົງປາຖນາໃຫ້ຫົວໃຈຂອງປະຊາຊົນຫັນກັບຄືນຫາພຣະເຈົ້າອົງທ່ຽງແທ້ຄື ພຣະຢາເວ. ມັນເບິ່ງເໝືອນວ່າການ

ທຳນວາຍກ່ຽວກັບການເຕືອນ, ການລົງໂທດແລະການຟື້ນຟູຄືນໃໝ່ທີ່ເຊຟານີຢາໄດ້ກ່າວໄວ້ກ່ອນການປະຕິຮູບຂອງກະສັດຢູດາໄດ້ວາງຮາກໄວ້ແລ້ວ.

ຕລອດພຣະທັມເຊຟານີຢາທັງເຫຼັ້ມ, ຜູ້ທຳນວາຍໄດ້ເວົ້າເຖິງຄວາມໂກດຮ້າຍແລະການພິພາກສາຂອງພຣະເຈົ້າຕໍ່ສູ້ຢູດາ, ຊົນຊາດອື່ນໆ, ແລະກຸງເຢຣູຊາເລັມ. ພົລເມືອງທັງຫຼາຍສຳນຶກຜິດໃນການຕິດຕາມພະອື່ນໆ, ແລະການພິພາກສາໄດ້ມາເຖິງ. ແຕ່ວ່າສຽງປະກາດຂອງຜູ້ທຳນວາຍເຊຟານີຢາໄດ້ມີການຫັນປ່ຽນຄັ້ງໃຫຍ່ເລີ້ມແຕ່ບົດ 3:9. ໄຟໂກດຮ້າຍອັນຊອບທັມອາດນຳສູ່ການລໍ່ຫຼອມພົນແຜ່ນດິນແລະປະຊາຊາດທັງໂລກໃຫ້ບໍຣິສຸດ. ໃນຂໍ້ 1-8, ເຊຟານີຢາໄດ້ເວົ້າເຖິງເຢຣູຊາເລັມ, ແຕ່ວ່າຄຳເວົ້າຟື້ນຟູເຫຼົ່ານີ້ກວມລວມຄົນທັງໂລກ. ພຣະປະສົງຂອງພຣະເຈົ້າກໍແມ່ນວ່າ *"ເພື່ອວ່າທຸກຄົນຈະຮ້ອງອອກພຣະນາມພຣະຜູ້ເປັນເຈົ້າແລະ ບົວຣະບັດພຣະອົງດ້ວຍຈິດ-ໃຈອັນດຽວກັນ. (ຂໍ້ 9).*

*ທ່ານຮູ້ຈັກຜູ້ໃດບໍ ທີ່ເປັນແບບຢ່າງຂອງຊີວິດແຫ່ງຄວາມຖ່ອມຕົວ?*

ຂໍ້ 11-13 ແຍ້ມໃຫ້ເຮົາເຫັນການກັ່ນກອງຂອງພຣະເຈົ້າຈະເປັນຜົນຢ່າງໃດ. ຄວາມອາຍໃນການກະທຳຜ່ານມາຂອງເຮົາຈະຖືກລຶບລ້າງ, ພ້ອມກັບຄວາມຈອງຫອງຂອງເຮົາ. ຈະສ້າງຄວາມຖ່ອມຕົວ ບໍ່ແມ່ນຄວາມໂອ້ອວດ. ປະຊາຊາດຂອງພຣະເຈົ້າຈະຖືກສະຖາປະນາຂຶ້ນໃໝ່ຄືພວກທີ່ເຂົ້າໃຈວ່າແມ່ນໃຜນັ່ງເທິງບັນລັງ, ແລະເຂົາຈະດຳເນີນຊີວິດຕາມຄວາມຈິງນີ້. ເຂົາ "ຈະບໍ່ທຳຜິດອີກ, "ແລະເຮັດແຕ່ສິ່ງຖືກຕ້ອງເມື່ອເຂົາຫຼຽວເຫັນກະສັດຜູ້ຊອບທັມ. ເຂົາຈະບໍ່ "ເວົ້າຄຳຕົວະອີກ" ແລະບໍ່ "ມີລີ້ນທີ່ກ່າວຄຳຕົວະ" ອີກຕໍ່ໄປເພື່ອເຂົາຈະໄດ້ຢູ່ກັບພຣະອົງແລະຮັບໃຊ້ພຣະເຈົ້າທ່ຽງແທ້ (ເບິ່ງ ເຮັບເຣີ 6:58).

ໂດຍສະເພາະການເຊື້ອເຊີນເປັນພາບທີ່ "ເຂົາຈະທ່ຽວໄປຊອກຫາກິນແລະນອນລົງພັກຜ່ອນໃນທົ່ງຫຍ້າໂດຍບໍ່ມີຜູ້ໃດເຮັດໃຫ້ເຂົາຢ້ານອີກ (ຂໍ້ 13). ແກະຈະບໍ່ພັກຜ່ອນຖ້າເຂົາຢ້ານ ແລະເຂົາຈະບໍ່ກິນຖ້າເຂົາຮູ້ສຶກວ່າຖືກຂົ່ມຂູ່. ແຕ່ເຂົາເຫຼົ່ານີ້ແມ່ນຄົນຂອງພຣະເຈົ້າ-ແກະຂອງພຣະອົງ-ຜູ້ທີ່ໄດ້ຮັບຄວາມຕື່ມເຕັມແລະພັກຜ່ອນຢ່າງພໍໃຈ. ພວກເຂົາໄດ້ພັກຜ່ອນຢ່າງນີ້ເພາະພຣະຜູ້ລ້ຽງຢູ່ນຳເຂົາ.

ຈົ່ງສັງເກດວ່າອານາຈັກນີ້ໝາຍເຖິງໃຜ: *"ໃນທ່າມກາງພວກເຈົ້າ ເຮົາຈະເຮັດໃຫ້ມີຈຳພວກຄົນທຸກຍາກທີ່ຖ່ອມໃຈເຫຼືອຢູ່" (ຂໍ້ 12).* ໃນພາສາເຮັບເຣີຄຳວ່າ "ຄົນທຸກຍາກ" ໝາຍເຖິງຄົນຈົນແລະອ່ອນເພຍ, ແລະ ຄຳວ່າ "ຖ່ອມໃຈ" ໝາຍເຖິງຄົນທີ່ມີຄວາມຕ້ອງການແລະທຸກທໍຣະມານທາງດ້ານຮ່າງກາຍ. ບໍ່ມີການອວດອ້າງແລະຈອງຫອງທ່າມກາງພວກເຂົາ ເພາະເຂົາຊາບວ່າບໍ່ມີຫຍັງໃນພວກເຂົາ.

ໃນຂັ້ນຕອນຫຼໍ່ຫຼອມນີ້, ພຣະເຈົ້າຈະຍົກເລີກຄວາມຢ້ານອອກໄປຈາກຄົນທີ່ຖ່ອມຕົວລົງຕໍ່ໜ້າພຣະອົງ. ເມື່ອພວກເຮົາກົ້ມຂາບພຣະເຈົ້າທ່ຽງແທ້, ພວກເຮົາບໍ່ຕ້ອງຢ້ານສິ່ງຕ່າງໆທີ່ເລັກນ້ອຍກວ່າ. ພຣະເຈົ້າປະທັບເທິງບັນລັງຂອງພຣະອົງ ແລ້ວຄວາມຢ້ານທັງໝົດຈະຖືກຍົກເລີກອອກໄປໃນທີ່ສຸດ.

## 2. <u>ເຊຟານີຢາ 3:14-17</u>.

*[14] ໂອ ລູກສາວແຫ່ງຊີໂອນເອີຍ ຈົ່ງຮ້ອງເພງດ້ວຍສຽງອັນດັງ ໂອ ອິສຣາເອນເອີຍ ຈົ່ງໂຫ່ຮ້ອງເຖີດ ໂອ ລູກສາວແຫ່ງເຢຣູຊາເລັມ*
*ຈົ່ງຊົມຊື່ນຍິນດີດ້ວຍສຸດໃຈຂອງເຈົ້າເຖີດ [15]ພຣະຜູ້ເປັນເຈົ້າຍົກເລີກການພິພາກສາລົງໂທດເຈົ້າແລ້ວພຣະອົງຂັບໄລ່ສັດຕູຂອງເຈົ້າ*
*ອອກໄປແລ້ວ ພຣະມະຫາກະສັດແຫ່ງອິສຣາເອນຄືພຣະຜູ້ເປັນເຈົ້າ ຊຶ່ງສະຖິດຢູ່ທ່າມກາງເຈົ້າ ເຈົ້າຈະບໍ່ເຫັນການອັນຕະລາຍອີກຕໍ່ໄປ*
*[16] ໃນວັນນັ້ນ ພວກເຂົາຈະເວົ້າກັບເຢຣູຊາເລັມວ່າ "ຢ່າຢ້ານເລີຍ" ແລະເວົ້າກັບຊີໂອນວ່າ "ຢ່າໃຫ້ມືຂອງເຈົ້າອ່ອນເພຍໄປ." [17]ພຣະຜູ້*
*ເປັນເຈົ້າພຣະເຈົ້າຂອງເຈົ້າທີ່ຢູ່ທ່າມກາງພວກເຈົ້າກໍມີຣິດເດດອຳນາດ ພຣະອົງຈະຊ່ວຍໃຫ້ລອດພົ້ນ ພຣະອົງຈະຊົມຊື່ນຍິນດີຍ້ອນ*
*ເຈົ້າ, ພຣະອົງຊົງມິດງຽບໃນຄວາມຮັກຂອງພຣະອົງ, ພຣະອົງຈະຊົງພໍພຣະທັຍພວກເຈົ້າກັບບົດເພງແຫ່ງຊັຍຊະນະຂອງພວກເຈົ້າ."*

ຮູບພາບຂອງການປ່ຽນແປງຄືນໃໝ່ໃນອານາຈັກຂອງພຣະເຈົ້ານີ້ຍິ່ງໃຫຍ່ແລະຊັກນຳເຮົາໃຫ້ນະມັສການພຣະອົງ. ເຊຟານີຢາຮຽກຮ້ອງ

ເຮົາໃຫ້ນະມັສການດ້ວຍຄຳສັ່ງຫຼາຍປະການ:

- **ຈົ່ງຮ້ອງເພງດ້ວຍສຸດໃຈຍິນດີ.** ຕລອດປະວັດສາດ, ປະຊາກອນຮ້ອງເພງເພື່ອສະແດງຄວາມຮູ້ສຶກ ແຕ່ຄວາມຮັກເຖິງຄວາມໂສກເສົ້າ. ແລະຄວາມຍິນດີທີ່ເຮົາໄດ້ຮັບຍ້ອນສິ່ງພຣະອົງໄດ້ກະທຳເພື່ອເຮົາ ແນ່ນອນຮຽກຮ້ອງຄວາມຮູ້ສຶກຍິນດີໃນບົດເພງ.
- **ຈົ່ງຮ້ອງດັງໆ.** ນີ້ບໍ່ຕ້ອງການຄຳອະທິບາຍສຳລັບແຟນກິລາ. ເວລາທີມຂອງເຮົາຊນະ, ພວກເຮົາຕື່ນເຕັ້ນແລະຮ້ອງສຽງດັງ. ກິລາກໍເປັນພຽງກິລາ, ເຖິງຢ່າງໃດກໍຕາມ, ເວລາເຮົາ "ຊນະ" ໃນຊີວິດເພາະພຣະຄຣິດໄດ້ຊັຍຊນະເພື່ອເຮົາ, ກໍຈະກະຕຸ້ນໃຫ້ເຮົາຮ້ອງ-ແລະຮ້ອງສຽງດັງ.
- **ຈົ່ງດີໃຈແລະສລອງ.** ປໂຍກໃນພາສາເຮັບເຣີສະທ້ອນຄວາມສຸກທີ່ສຸດທີ່ພວກເຮົາສະແດງອອກພາຍນອກ, ແລະພວກເຮົາຕ້ອງສະແດງອອກດ້ວຍ "ສຸດຈິດສຸດໃຈຂອງເຈົ້າ. ໃນຂໍ້ 15, ເຊຟານີຢາໄດ້ເຕືອນພວກເຮົາວ່າເຫດໃດພວກເຮົາຕ້ອງຍິນດີ.
- **ການລົງໂທດຂອງເຮົາໄດ້ຖືກຍົກເລີກແລ້ວ.** ພວກເຮົາເຫັນສິ່ງນີ້ໃນທີ່ສຸດ ຖືກສຳແດງອອກດ້ວຍສິ່ງພຣະເຢຊູໄດ້ຊົງກະທຳເທິງໄມ້ກາງແຂນແທນພວກເຮົາ.
- **ສັດຕູຂອງເຮົາໄດ້ໜີໄປ.** ໃນສະພາບການທາງດ້ານປວັດສາດຄາວນັ້ນ, ບໍ່ຄ່ອຍແຈ່ມແຈ້ງວ່າສັດຕູພວກໃດທີ່ຊາວອິສຣາເອັນປະເຊີນຢູ່, ແຕ່ຍ້ອນພຣະຄຣິດ, ຈຶ່ງບໍ່ມີສັດຕູຄົນໃດກ້າຕໍ່ສູ້.
- **ພຣະຜູ້ເປັນເຈົ້າຢູ່ກັບເຮົາ.** ຄວາມບາບໄດ້ແຍກເຮົາຈາກຄວາມສັມພັນກັບພຣະເຈົ້າ, ແຕ່ວ່າຕັ້ງແຕ່ພຣະຄຣິດໄດ້ຈັດການກັບບັນຫາຄວາມບາບຂອງເຮົາແລ້ວ, ພວກເຮົາສາມາດຢືນຊ້ອງພຣະພັກພຣະເຈົ້າຢ່າງອິສຣະ, ຮັບການອະພັຍ, ແລະບໍ່ໄດ້ລະອາຍ.
- **ຄວາມຢ້ານຂອງເຮົາຖືກຍົກເລີກແລ້ວ.** ແລະໃນເວລາຄອງຣາດ, ຣິດອຳນາດຂອງອົງພຣະຜູ້ເປັນເຈົ້າແຫ່ງຈັກກະວານທັງໝົດກໍຢູ່ຂ້າງເຮົາ, ພວກເຮົາບໍ່ຕ້ອງຢ້ານສິ່ງໃດໃນເມື່ອພຣະເຈົ້າຢູ່ກັບເຮົາ.

ພວກເຮົາເຫັນໃນຂໍ້ 17, ພຣະເຈົ້າຂອງເຮົາເປັນນັກຮົບຜູ້ຍິ່ງໃຫຍ່, ພຣະອົງຊົງຍິນດີໃນພວກເຮົາ! ຄິດວ່າພຣະເຈົ້າຍິ່ງໃຫຍ່ອາດຮ້ອງເພງເໜືອພວກທີ່ປະຕິເສດພຣະອົງແນ່ນ. ເຖິງຢ່າງໃດກໍຕາມ, ນັ້ນແມ່ນສິ່ງທີ່ພຣະອົງຊົງກະທຳຢ່າງຊັດເຈນ.

ເມື່ອໃດການສະຖິດນຳຂອງພຣະເຈົ້າຊ່ອຍທ່ານຢືນສູ້ຜ່ານຜ່າຄວາມຢ້ານ?

## 3. <u>ເຊຟານີຢາ 3:18-20.</u>

*18 ເຮົາຈະລວບລວມຄົນທີ່ເສົ້າໂສກໃຈ ຍ້ອນການຊຸມນຸມອັນສັກສິດ, ພວກເຂົາໄດ້ຢູ່ໃນພວກເຈົ້າ, ພວກເຂົາຈຶ່ງຖືກປະຈານໃຫ້ອັບອາຍ
ຂາຍໜ້າຢ່າງໜັກ. 19 ເບິ່ງແມ ໃນຄາວນັ້ນ ເຮົາຈະລົງໂທດຜູ້ທີ່ບີບບັງຄັບເຈົ້າທຸກຄົນ ເຮົາຊ່ວຍຄົນຂາພິການໃຫ້ພົ້ນ ແລະລວບລວມ
ຄົນທີ່ຖືກຂັບໄລ່ໜີ ເຮົາຈະເຮັດໃຫ້ພວກເຂົາເປັນທີ່ສັຣເສີນ ແລະມີຊື່ສຽງຊ່າລືໄປທຸກໆບ່ອນ ທີ່ພວກເຂົາໄດ້ມີຄວາມອັບອາຍຢ່າງໜັກ
ນັ້ນ. 20 ໃນຄາວນັ້ນເຮົາຈະນຳພວກເຈົ້າກັບຄືນມາອີກ ຄືໃນຄາວທີ່ເຮົາໄດ້ລວບລວມພວກເຈົ້າເຂົ້ານຳກັນ ເຮົາຈະເຮັດໃຫ້ເຈົ້າມີຊື່ສຽງ
ແລະ ເປັນທີ່ສັຣເສີນໃນທ່າມກາງບັນດາຊົນຊາດທັງຫຼາຍໃນແຜ່ນດິນໂລກ ຄືເມື່ອເຮົາຈະໃຫ້ພວກເຈົ້າກັບສູ່ສະພາບເດີມ ຕໍ່ໜ້າຕໍ່ຕາ
ພວກເຈົ້າ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫຼະ.*

ເມື່ອບໍ່ນານມານີ້ ຄອບຄົວຂອງຂ້າພະເຈົ້າໄດ້ຍ້າຍເຂົ້າບ້ານປັບປຸງໃໝ່. ເມື່ອຂ້າພະເຈົ້າເວົ້າວ່າປັບປຸງໃໝ່, ຂ້າພະເຈົ້າໝາຍຄວາມວ່າຊ່າງຮັບເໝົາກໍ່ສ້າງໄດ້ຮື້ຫຼັງເກົ່າອອກເຫຼືອໄວ້ແຕ່ໄມ້ຂ້າວແລະໂຄງຮ່າງເທົ່ານັ້ນ. ເມື່ອພວກເຮົາເຂົ້າເບິ່ງເຮືອນຄັ້ງແລກ, ມີສຽງອຸທານພຽງເລັກໜ້ອຍ, ແຕ່ພວກເຮົາບໍ່ໄດ້ວາງຄວາມເຫັນຂອງພວກເຮົາໃສ່ສິ່ງທີ່ຕາເຫັນໃນສະພາບປະຈຸບັນ. ພວກເຮົາວາງໃສ່ສິ່ງທີ່ຈະມີມາ. ແຕ່ລະອາທິດເຮືອນປ່ຽນໄປ, ແລະຍິ່ງພວກຊ່າງທຳງານ, ຍິ່ງຄ້າຍຄືກັບສິ່ງທີ່ໄດ້ບອກໄວ້ລ່ວງໜ້າ. ແລ້ວວັນນັ້ນກໍມາເຖິງ ເມື່ອມັນຖືກປົວແປງສຳເຣັດແລະພວກເຮົາໄດ້ຍ້າຍເຂົ້າ.

ເຊຟານີຢາໄດ້ເວົ້າເຖິງການປົວແປງຄັ້ງໃຫຍ່ກວ່າ, ປະການນຶ່ງແມ່ນອານາຈັກຕລອດໄປເປັນນິດຂອງພຣະເຈົ້າ. ພຣະເຈົ້າຢາກໃຫ້

ເຂົາເຫັນວ່າ ໃນອານາຄົດເຫດຜົນທັງໝົດຂອງການພິພາກສາຈະຖືກຍົກເລີກ ແລະຜູ້ທີ່ປະສົບຄວາມທຸກຮ້ອນຍ້ອນບາບ ແລະ ຖືກບີບບັງຄັບຈະໄດ້ຮັບການບັນເທົາ. ພວກເຮົາອາດໄດ້ຮັບຄວາມອັບອາຍກັບຄວາມຫຍຸ້ງຍາກທີ່ພວກເຮົາປະສົບໃນຊີວິດ, ແຕ່ຄວາມຢ້ານທັງຄວາມອັບອາຍຍິ່ງທະວີຄູນຂຶ້ນ. ເວລາປົວແປງບ້ານຂອງຂ້າພະເຈົ້າ, ຂ້າພະເຈົ້າປະສົບຄວາມຮູ້ສຶກຢ່າງນັ້ນ, ແຕ່ບໍ່ລົດລະ. ວັນນຶ່ງກໍຕ້ອງສຳເຣັດ, ແລະພວກເຮົາຕ້ອງໄດ້ເຂົ້າໄປຢູ່. ພວກເຮົາຕ້ອງມີຄວາມຄິດຢ່າງດຽວກັນໃນຖານະຜູ້ຕິດຕາມພຣະຄຣິດ. ບໍ່ວ່າຈະມີຄວາມຢ້ານ ຄວາມອັບອາຍທີ່ພວກເຮົາຕ້ອງປະເຊີນ, ຕ້ອງສູ້ທົນ, ຈົ່ງຮູ້ວ່າວັນນຶ່ງມັນຈະຜ່ານພົ້ນໄປແລະໄປຢູ່ເບື້ອງຫຼັງເຮົາ. ໃນຂນະດຽວກັນ: ພວກເຮົາບໍ່ຄວນເສັຽໃຈໃນຣະຫວ່າງເດີນທາງ.

*ທ່ານເຫັນພຣະເຈົ້ານຳເອົາຄວາມຍິນດີມາແທນຄວາມຢ້ານຢ່າງໃດ?*

ໃນຂໍ້ 20, ພຣະເຈົ້າໄດ້ຕຣັດຜ່ານເຊຟານີຢາເພື່ອເຕືອນພວກເຮົາວ່າ ພຣະອົງຊົງສັດຊື່ ຕ້ອງທຳສິ່ງພຣະອົງເລີ້ມມາໃຫ້ສຳເຣັດ. ທ່ານໂປໂລໄດ້ຢືນຢັນຄວາມຈິງນີ້: *"ເຮົາແນ່ໃຈວ່າພຣະອົງຜູ້ຊົງຕັ້ງຕົ້ນການດີໄວ້ໃນພວກເຈົ້າແລ້ວ ຄົງຈະຊົງກະທຳໃຫ້ສຳເລັດຈົນເຖິງວັນແຫ່ງພຣະເຢຊູຄຣິດ" (ຟີລິບປອຍ 1:6).* ພວກເຮົາບໍ່ຕ້ອງຢ້ານເພາະພຣະເຈົ້າຮັກສາຄຳສັນຍາຂອງພຣະອົງ. ພຣະອົງຊົງຮັກສາແລະຈະຊົງຮັກສາຕລອດໄປ. ພວກເຮົາຈະຖືກປົວແປງໃຫ້ສຳເຣັດແລະຄວາມຢ້ານຈະບໍ່ມີອີກຕໍ່ໄປຍ້ອນຄວາມດີ ຂອງພຣະມະຫາກະສັດຂອງເຮົາ.

ຈາກຄຳສັນຍາທັງໝົດຂອງພຣະເຈົ້ານີ້ ເຫດໃດພວກເຮົາຈຶ່ງຍັງສູ້ຍັນກັບຄວາມຢ້ານຢູ່?

## ນຳໃຊ້ໃນຊີວິດ

ຄວາມຢ້ານຈະກາຍເປັນອາດີດໃນອານາຈັກຕລອດໄປເປັນນິດຂອງພຣະເຈົ້າ. ທ່ານຈະດຳເນີນຊີວິດຕາມຄວາມຈິງນີ້ ແລະເລືອກຍິນດີເໜືອຄວາມຢ້ານກົວຢ່າງໃດ? ຈົ່ງເລືອກນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງຂອບຄຸນ.** ຈົ່ງສະທ້ອນເຊຟານີຢາ 3 ແລະ ພຣະນິມິດ ບົດ 21-22. ຂອບຄຸນພຣະເຈົ້າສຳລັບທົນທາງອານາຈັກສວັນຂອງພຣະອົງບໍ່ຄືກັນກັບໂລກທີ່ເຮົາຢູ່ດຽວນີ້.
- **ຈົ່ງທ່ອງຈຳ.** ເພື່ອເປັນເຄື່ອງເຕືອນໃຈໃນຄວາມຍິນດີທີ່ເຮົາມີໃນພຣະຄຣິດ, ຈົ່ງທ່ອງຈຳ ເພງສັຣເສີນ 16:11; "*ພຣະອົງຊົງຊີ້ໃຫ້ຂ້ານ້ອຍເຫັນທົນທາງຊຶ່ງນຳໄປສູ່ຊີວິດ ພຣະພັກຂອງພຣະອົງເຮັດໃຫ້ຂ້ານ້ອຍເຕັມໄປດ້ວຍຄວາມມ່ວນຊື່ນແລະຄວາມຊົດຊ່ອຍຂອງພຣະອົງກໍນຳຄວາມຍິນດີມາໃຫ້ຕລອດໄປ."*
- **ຈົ່ງເປັນພະຍານ.** ຈົ່ງແບ່ງປັນຂ່າວປະເສີດກັບຄົນໃດຄົນນຶ່ງ. ມີຄົນທີ່ບໍ່ມີການຄ້ຳປະກັນຄວາມຍິນດີໃນພຣະຄຣິດອ້ອມຮອບຢູ່. ອ້ອນວອນໃຫ້ພຣະເຈົ້າເປີດເຜີຍໃຫ້ທ່ານເຫັນວ່າແມ່ນໃຜ ແລະອະທິຖານເພື່ອໂອກາດແບ່ງປັນຄວາມຮັກຂອງພຣະຄຣິດແລະສິ່ງທີ່ພຣະອົງໄດ້ກະທຳເພື່ອລາວ.

ໃນຫຼາຍໆທາງ, ຊີວິດເປັນເໝືອນການແຂ່ງແລ່ນມາຣາທອນ. ມີການຝຶກແອບມາກມາຍແລະມີຄວາມເຈັບປວດຫຼາຍໃນການເດີນທາງ. ແຕ່ກໍມີຄວາມຮູ້ສຶກຍິນດີຕາມທາງແລະແນ່ນອນໃນທີ່ສຸດປາຍຖ້າພວກເຮົາເລືອກເດີນຕາມທາງນັ້ນ ແທນທີ່ຈະຖືກຄອບຄອງດ້ວຍຄວາມຢ້ານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**